*Souphanouvong University Journal of Multidisciplinary Research and Development*
*2026, Vol. 12, No. 03, 226-232*
*https://doi.org/10.69692/SUJMRD1203226*

# Approaches for Developing the Old Urban Area of Vientiane Capital to Create Economic Value and Sustainable Tourism

**Luangphasy Sengonkeo[1], Soukanh Chithphanya, Phouvone Keoluexay, Viengsavanh Lastsapheht and Phonesavanh Southichak**
*Faculty of Architecture, National University of Laos, Lao PDR*

*[1]Correspondence:*
*Luangphasy Sengonkeo,*
*Faculty of Architecture, National University of Laos,*
*Telephone: +85620 23448447,*
*Email: s.luangphasy@nuol.edu.la*

**Article Info:**
**Submitted: May 21, 2026**
**Revised: August 25, 2026**
**Accepted: September 3, 2026**

**Abstract**

This research aims to study and propose strategies for developing the old urban area of Vientiane Capital to generate economic value and foster sustainable tourism, with a focus on striking a balance between heritage conservation and modern development. This study employs a mixed-methods research approach, gathering quantitative data from a sample of 111 local residents and business operators analyzed using descriptive statistics alongside qualitative data obtained through on-site physical surveys. The research findings indicate the following regarding the area's potential: In terms of physical attributes and heritage, the area's greatest strengths lie in its role as a spiritual and historical hub particularly its temples ($\bar{X}$= 4.07, SD=0.87), historic buildings, and convenient connectivity to the Mekong riverfront. Regarding culture and lifestyle, cultural activities serve as the primary attraction ($\bar{X}$= 3.84, SD=0.93). Economically, the area features a diverse range of service businesses ($\bar{X}$= 3.95, SD=0.88) that are well-positioned for development into a creative economic zone. 2) Issues and constraints: Regarding physical aspects, the primary problems are the deterioration of historic buildings due to a lack of maintenance ($\bar{X}$= 3.92, SD=0.99) and a lack of green space; in terms of infrastructure, traffic congestion and disorderly parking are the most severe issues ($\bar{X}$= 4.12, SD=0.99), followed by problems with electrical wiring, waste management, and dilapidated walkways; regarding economic and management aspects, building owners lack the budget for restoration ($\bar{X}$= 3.69, SD=0.96) and rising living costs are beginning to impact the traditional community lifestyle. 3) Development guidelines and strategies: regarding the physical environment, the focus is on improving street lighting ($\bar{X}$= 4.06, SD=1.06), increasing small green spaces, and establishing standards for building facade renovation; regarding infrastructure, the focus is on upgrading walkways to ensure maximum convenience and continuity ($\bar{X}$= 4.21, SD=1.00), allocating peripheral parking, and designating pedestrian zones; and regarding the creative economy, the focus is on promoting regular activities and festivals ($\bar{X}$= 3.98, SD=0.90), branding the area as a "Cultural and Creative Hub", utilizing digital maps, and developing community products.

**Keyworlds:** *Sustainable urban development, heritage conservation, creative economy, walkable city, Vientiane Old Town.*

## 1. ພາກສະເໜີ

ນະຄອນຫຼວງແຫ່ງອານາຈັກລາວລ້ານຊ້າງ ແລ້ວ ປ່ຽນມາເປັນສູນກາງການປົກຄອງຂອງອານານິຄົມຝຣັ່ງ ໃນແຄວ້ນລາວ ຕໍ່ມາໄດ້ກາຍເປັນນະຄອນຫຼວງຂອງຣາຊະອານາຈັກລາວ, ຈາກນັ້ນມາກໍ່ໄດ້ກາຍມາເປັນນະຄອນຫຼວງຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແຕ່ປີ 1975 ເປັນຕົ້ນມາ ແລະ ນະຄອນຫຼວງວຽງຈັນ ມີປະຫວັດອັນຍືດຍາວ ຊຶ່ງໃນຫຼາຍສະໄໝກໍ່ຮຸ່ງເຮືອງເຫຼືອງເຫຼື້ອມ, ປະຊາຊົນມີຄວາມສະຫງົບສຸກ, ມີຄວາມຢູ່ດີກິນດີ ມີຊື່ສຽງໃນອາຊີ ແລະ ຮັບຮູ້ຈາກບາງປະເທດໃນເອີຣົບວ່າ: ປູຊະນີຍະສະຖານອັນລືຊື່ ເປັນປະເທດທີ່ມີອະຣິຍະທຳອັນງົດງາມ ມີວັດຖຸບູຮານ ໃນທົ່ງພຽງແມ່ນ້ຳຂອງແຫ່ງນີ້ (ມະໂນທັມ, 2009 ກ). ເມື່ອຝຣັ່ງໄດ້ເຂົ້າມາຍຶດເອົາລາວໃນປີ 1893 ແລ້ວ ກໍ່ໄດ້ມາປົກຄອງເມືອງລາວ ໃນເບື້ອງກຳຊ້າຍຂອງແມ່ນ້ຳຂອງ ຈຶ່ງໄດ້ພົບພໍ້ເມືອງຮ້າງຂອງນະຄອນຫຼວງວຽງຈັນ ທີ່ເຕັມໄປດ້ວຍຊາກສະຫຼັກຫັກພັງຂອງວັດວາອາຣາມ, ລາຊະວັງ, ຫໍໂຮງ, ເຮືອນຊານ, ກຳແພງເມືອງ ຢ່າງຊະຊາຍເຕັມໄປໝົດ (ມະໂນທັມ, 2009 ຂ). ຈາກນັ້ນເມືອງວຽງຈັນ ໄດ້ຄ່ອຍມີຊີວິດຊີວາຄືນມາອີກ ແລ້ວກາຍເປັນທີ່ຕັ້ງເມືອງເອກຂອງ ແຄວ້ນລາວ ໃນອິນດູຈີນຝຣັ່ງເສດຈີນເຖິງປີ 1954, ແລ້ວກາຍມາເປັນນະຄອນຫຼວງແຫ່ງ ຣາຊະອານາຈັກລາວ ແຕ່ປີ 1954 ເຖິງ 1975 ຈຶ່ງໄດ້ສະຖາປະນານະຄອນຫຼວງວຽງຈັນ ໃຫ້ກາຍເປັນນະຄອນຫຼວງ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໃນວັນທີ 2 ທັນວາ ປີ 1975 (ມະໂນທັມ, 2009 ຄ). ນະຄອນຫຼວງວຽງຈັນ ມີປະຫວັດສາດການວາງຜັງເມືອງມາຢ່າງຍາວນານ ນັບຕັ້ງແຕ່ທ້າຍສະຕະວັດທີ 19 ພາຍໃຕ້ອິດທິພົນຂອງອຳນາດການປົກຄອງອານານິຄົມຝຣັ່ງ ເຊິ່ງໄດ້ວາງຮາກຖານໂຄງລ່າງພື້ນຖານ, ລະບົບຖະໜົນແບບຕາຕະລາງ (Grid System) ແລະ ການແບ່ງເຂດການນຳໃຊ້ທີ່ດິນທີ່ຊັດເຈນ ລະຫວ່າງ ເຂດຫ້ອງການລັດ, ທີ່ພັກອາໄສ ແລະ ວັດວາອາ

*Copyright © 2026 by the Authors. Published by Souphanouvong University. This is an open access article under the CC BY-NC-ND license (http://creativecommons.org/licenses/by-nc-nd/4.0/*

ຮາມ (Hayward, 2017; Sayarath, 2003). ຜ່ານຫຼາຍທົດສະວັດ, ຕົວເມືອງໄດ້ຮັບການປັບປຸງໂຄງສ້າງ ແລະ ຂະຫຍາຍຕົວຢ່າງຕໍ່ເນື່ອງຈາກເຂດຕົວເມືອງຊັ້ນໃນອອກສູ່ເຂດຊານເມືອງ, ໂດຍສະເພາະແມ່ນການເພີ່ມຂຶ້ນຂອງເນື້ອທີ່ຕົວເມືອງຈາກ 20,950 ເຮັກຕາ ໃນປີ 2000 ມາເປັນ 61,600 ເຮັກຕາ ໃນປີ 2010 (JICA, 2011). ແຕ່ເຂດຕົວເມືອງເກົ່າຍັງຄົງເປັນ "ຫົວໃຈ" ທີ່ບັນຈຸມໍລະດົກທາງສະຖາປັດຕະຍະກຳ ແລະ ວິຖີຊີວິດດັ້ງເດີມໄວ້.

ໃນປັດຈຸບັນ, ພາຍໃຕ້ຜັງເມືອງລວມຮອດປີ 2030, ລັດຖະບານໄດ້ກຳນົດວິໄສທັດການພັດທະນາຕົວເມືອງທີ່ໜ້າຢູ່ ແລະ ຍືນຍົງ ໂດຍນຳໃຊ້ໂຄງສ້າງແບບ "ຫຼາຍສູນກາງ" (Multi-core Structure) ເພື່ອຄວບຄຸມການແຜ່ລາມຂອງຕົວເມືອງ ແລະ ຫຼີກລ່ຽງຄວາມແອອັດໃນເຂດໃຈກາງ (JICA, 2011). ເຖິງຢ່າງໃດກໍຕາມ, ໃນຂະນະທີ່ຕົວເມືອງຂະຫຍາຍຕົວຕາມແນວຖະໜົນສາຍຫຼັກ ແລະ ເຂດເສດຖະກິດໃໝ່, ເຂດ "ອະນຸລັກປະຫວັດສາດ" ຫຼື ເຂດຕົວເມືອງເກົ່າຍັງຄົງເປັນຫົວໃຈສຳຄັນທີ່ຮັກສາອັດຕະລັກ ແລະ ມໍລະດົກທາງສະຖາປັດຕະຍະກຳໄວ້. ຄຸນຄ່າຂອງມໍລະດົກສະຖາປັດຕະຍະກຳແມ່ນມີຄວາມໝາຍທາງດ້ານປະຫວັດສາດ, ຄວາມສຳຄັນທາງດ້ານວັດທະນະທຳ ແລະ ລັກສະນະຂອງສະຖາປັດຕະຍະກຳທີ່ເປັນເອກະລັກສະເພາະ ເຊິ່ງສະແດງໃຫ້ເຫັນເຖິງຄຸນຄ່າທາງປະຫວັດສາດ, ວັດທະນະທຳ ແລະ ສັງຄົມທີ່ ເຕັມໄປດ້ວຍກິດຈະກຳການເຄື່ອນໄຫວວັດທະນະທຳດຳເນີນຢູ່ໃນຕົວເມືອງ (Sengonkeo et al., 2024b).

ຄວາມສຳຄັນຂອງບັນຫາແມ່ນຢູ່ທີ່ວ່າ ພາຍໃຕ້ກະແສການພັດທະນາ ແລະ ການຂະຫຍາຍຕົວທາງເສດຖະກິດຢ່າງໄວວາ, ເຂດຕົວເມືອງເກົ່າກຳລັງປະເຊີນກັບຄວາມທ້າທາຍໃນການປັບຕົວ. ຖ້າຂາດການວາງແຜນພັດທະນາທີ່ເໝາະສົມ ທີ່ສາມາດເຊື່ອມໂຍງຄຸນຄ່າທາງປະຫວັດສາດເຂົ້າກັບກິດຈະກຳທາງເສດຖະກິດສະໄໝໃໝ່, ພື້ນທີ່ດັ່ງກ່າວອາດສູນເສຍສະ ເໜ່ ແລະ ອັດຕະລັກດັ້ງເດີມໄປ. ດັ່ງນັ້ນ, ການສຶກສາແນວທາງການພັດທະນາເຂດຕົວເມືອງເກົ່າ ເພື່ອສ້າງມູນຄ່າເພີ່ມທາງດ້ານເສດຖະກິດ ແລະ ການທ່ອງທ່ຽວແບບຍືນຍົງ ຈຶ່ງມີຄວາມຈຳເປັນຢ່າງຍິ່ງ ເພື່ອໃຫ້ສອດຄ່ອງກັບກົດໝາຍວ່າດ້ວຍການວາງຜັງເມືອງ ແລະ ວິໄສທັດປີ 2030 ທີ່ມຸ່ງເນັ້ນການສ້າງຕົວເມືອງໃຫ້ມີຄວາມສົມດຸນລະຫວ່າງການອະນຸລັກ ແລະ ການເຕີບໂຕ. ການຟື້ນຟູບັນດາສະຖານທີ່ສຳຄັນ ແລະ ການເຊື່ອມໂຍງເຂົ້າກັບບັນດາເສັ້ນທາງທ່ອງທ່ຽວ ແມ່ນໂອກາດສຳຄັນເພື່ອຊຸກຍູ້ເສດຖະກິດທ້ອງຖິ່ນ, ຮັກສາມໍລະດົກວັດທະນະທຳ, ເສີມຂະຫຍາຍຕາໜ່າງການທ່ອງທ່ຽວຂອງພາກພື້ນ. ການສຶກສາໄດ້ແນະນຳໃຫ້ຈັດລຳດັບຄວາມສຳຄັນຂອງການຮັກສາມໍລະດົກທາງດ້ານສະຖານທີ່ບູຮານສະຖານ, ສາດສະໜາສະຖານ, ເສີມຂະຫຍາຍສະຖານທີ່ທ່ອງທ່ຽວ ແລະ ການພັດທະນາເສັ້ນທາງການທ່ອງທ່ຽວທີ່ເຊື່ອມຕໍ່ກັນໃນຂະນະທີ່ຮັບປະກັນການມີສ່ວນຮ່ວມຂອງຊຸມຊົນ ແລະ ການປະຕິບັດແບບຍືນຍົງ (Sengonkeo et al., 2025a). ການຮັກສາບູຮານ ສະຖານຢູ່ໃນວຽງຈັນໃນລາວນັບມື້ນັບໄດ້ຮັບການຍອມຮັບວ່າມີຄວາມຈຳເປັນ ບໍ່ພຽງແຕ່ ເພື່ອຮັກສາມໍລະດົກທາງດ້ານປະຫວັດສາດ ແລະ ວັດທະນະທຳເທົ່ານັ້ນ ແຕ່ຍັງເປັນການສົ່ງເສີມການທ່ອງທ່ຽວແບບຍືນຍົງອີກດ້ວຍ. ບູຮານສະຖານເມືອງວຽງຈັນເປັນໂຄງສ້າງປະຫວັດສາດທີ່ມີມາແຕ່ຍາວນານ, ເປັນຫັກຖານສະແດງເຖິງປະຫວັດສາດອັນ ອຸດົມສົມບູນ ແລະ ມີຄວາມສຳຄັນທາງສະຖາປັດຕະຍະກຳຂອງເມືອງວຽງຈັນ (ມະໂນທັມ, 2009 ກ).

ສະນັ້ນ, ຈຸດປະສົງການຄົ້ນຄວ້າຄັ້ງນີ້ແມ່ນມີຈຸດປະສົງຄື: 1) ເພື່ອສຶກສາທ່າແຮງທາງດ້ານກາຍະພາບ, ມໍລະດົກວັດທະນະທຳ ແລະ ວິຖີຊີວິດ ຂອງເຂດຕົວເມືອງເກົ່ານະຄອນຫຼວງວຽງຈັນ ທີ່ມີຜົນຕໍ່ການດຶງດູດການທ່ອງທ່ຽວ ແລະ ການພັດທະນາເສດຖະກິດສ້າງສັນ, 2) ເພື່ອວິເຄາະສະພາບບັນຫາ ແລະ ຂໍ້ຈຳກັດ ໃນດ້ານໂຄງລ່າງພື້ນຖານ, ສິ່ງແວດ ລ້ອມ, ການຄຸ້ມຄອງມໍລະດົກ ແລະ ຜົນກະທົບທາງດ້ານເສດຖະກິດ-ສັງຄົມ ທີ່ເກີດຂຶ້ນໃນພື້ນທີ່ເຂດຕົວເມືອງເກົ່າໃນປະຈຸບັນ ແລະ 3) ເພື່ອສະເໜີແນວທາງ ແລະ ຍຸດທະສາດໃນການພັດທະນາພື້ນທີ່ ໃຫ້ກາຍເປັນສູນກາງການທ່ອງທ່ຽວແບບຍືນຍົງ ໂດຍເນັ້ນການສ້າງມູນຄ່າເພີ່ມທາງດ້ານເສດຖະກິດ ຜ່ານການປັບໃຊ້ຢ່າງສ້າງສັນ ແລະ ການມີສ່ວນຮ່ວມຂອງຊຸມຊົນ.

## 2. ອຸປະກອນ ແລະ ວິທີການການ

### 2.1. ການເກັບກຳຂໍ້ມູນ

1) ຂໍ້ມູນຂັ້ນໜຶ່ງ: ລົງເກັບກຳຂໍ້ມູນພາກສະໜາມໃນເຂດພື້ນທີ່ສຶກສາແມ່ນຈະເກັບກຳຂໍ້ມູນຈາກສອງສ່ວນຄື: ສ່ວນທີ່ໜຶ່ງແມ່ນນຳໃຊ້ວິທີການສຶກສາຄົ້ນຄວ້າທາງປະລິມານ (Quantitative Research) ແລະ ດ້ວຍວິທີແຈກແບບສອບຖາມແບບເຈາະຈົງ ແລະ ແຈກຢາຍແບບງ່າຍດາຍ. ສ່ວນທີ່ສອງແມ່ນນຳໃຊ້ຮູບແບບການເກັບກຳພື້ນສະພາບຂອງພື້ນທີ່ ໂດຍສະເພາະແມ່ນໂຄງສ້າງຕົວເມືອງ, ພື້ນທີ່ວັດເກົ່າ ແລະ ສະຖາປັດຕະຍະກຳເກົ່າ ໂດຍການລົງສຳຫຼວດປະກອບດ້ວຍການສຳຫຼວດຂອບເຂດພື້ນທີ່ເຂດໃຈກາງຕົວເມືອງເກົ່ານະຄອນຫຼວງວຽງຈັນ ແລະ ໂດຍຮອບທາງດ້ານກາຍຍະພາບຕົວເມືອງ, ທີ່ຕັ້ງພູສັນຖານ, ສະພາບແວດລ້ອມອ້ອມຂ້າງ, ສະພາບປັດຈຸບັນຂອງພື້ນທີ່ ເຊິ່ງປະກອບດ້ວຍການປະເມີນຕົວເມືອງເກົ່ານະຄອນຫຼວງວຽງຈັນ, ພື້ນທີ່ວັດເກົ່າ, ສະຖາປັດຕະຍະກຳອານານິຄົມ, ສະຖະປັດຕະຍະກຳພື້ນຖິ່ນ ເພື່ອສັງລວມໃຫ້ເຫັນເຖິງຮູບແບບແຜນຜັງໂຄງສ້າງຕົວເມືອງເກົ່ານະຄອນຫຼວງວຽງຈັນ ນອກຈາກນັ້ນຍັງຈະມີການສຶກສາຂໍ້ມູນທາງດ້ານສັງຄົມທີ່ກ່ຽວຂ້ອງກັບຄວາມເຊື່ອຕ່າງໆຂອງຄົນໃນທ້ອງຖິ່ນເຊັ່ນ: ບຸນປະເພນີ, ພິທີກຳຕ່າງໆ ແລະ ການເຄື່ອນໄຫວຕ່າງໆທາງດ້ານວັດທະນະທຳ.

2) ຂໍ້ມູນຂັ້ນສອງ: ສຶກສາ ແລະ ຮວບຮ່ວມຂໍ້ມູນເບື້ອງຕົ້ນກ່ຽວກັບຄວາມເປັນມາ ແລະ ການສ້າງຕັ້ງນະຄອນຫຼວງວຽງຈັນຈາກເອກະສານ, ບົດຄວາມ ແລະ ບົດວິໄຈທີ່ກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດຈາກແຫຼ່ງຂໍ້ມູນຕ່າງໆ ເຊັ່ນ: ຫໍສະໝຸດ, ຈາກອິນເຕີເນັດ ແລະ ວາລະສານຕ່າງໆ ນອກຈາກນັ້ນເພື່ອກຽມຄວາມພ້ອມກ່ອນການລົງສຳຫຼວດພື້ນທີ່ສຶກສາ ຜູ້ວິໄຈຈະໄດ້ສຶກສາຂໍ້ມູນຈາກພະແນກການຕ່າງໆທາງພາກລັດທີ່ກ່ຽວຂ້ອງກ່ຽວກັບປະຫວັດອາຄານສະຖາປັດຕະຍະກຳໃນລາວ, ສະພາບການການອະນຸຮັກ ແລະ ຄຸ້ມຄອງອາຄານໃນປັດຈຸບັນ ເຊັ່ນ: ກົມມໍລະດົກ ກະຊວງວັດທະນະທຳ ແລະ ທ່ອງທ່ຽວ, ພະແນກວັດທະນະທຳ ແລະ ທ່ອງທ່ຽວ ນະຄອນຫຼວງວຽງຈັນ.

### 2.2. ກຸ່ມຕົວຢ່າງ ແລະ ກຸ່ມເປົ້າໝາຍ

ໃນການຄົ້ນຄວ້າແມ່ນໄດ້ກຳນົດກຸ່ມຕົວຢ່າງ ແລະ ກຸ່ມເປົ້າໝາຍ ດັ່ງລຸ່ມນີ້:

- ໃນການຄົ້ນຄວ້າໄດ້ກຳນົດປະຊາກອນຕົວຢ່າງແມ່ນແບ່ງອອກຄື: ກຸ່ມປະຊາກອນຕົວຢ່າງທີ່ອາໄສ, ປະກອບທຸລະກິດໃນພື້ນທີ່, ກຸ່ມປະຊາກອນຕົວຢ່າງທີ່ເປັນຕົວແທນຂອງສຳນັກງານຫ້ອງການ ແລະ

ກຸ່ມນັກທ່ອງທ່ຽວ ການຄັດເລືອກປະຊາກອນຕົວຢ່າງທີ່ໃຊ້ໃນການສຶກສາຄັ້ງນີ້ ໂດຍວິທີການຄັດເລືອກກຸ່ມຕົວຢ່າງໃນການວິໄຈຄື: ວິທີການສຸ່ມຕົວຢ່າງ (Sedgwick, 2013) ເນື່ອງຈາກບໍ່ຮູ້ຈຳນວນປະຊາກອນແນ່ນອນ. ດັ່ງນັ້ນ, ຈຶ່ງຫາຈຳນວນປະຊາກອນຕົວຢ່າງດ້ວຍວິທີການຄຳນວນດ້ວຍສູດການຫາປະຊາກອນຕົວຢ່າງ ກໍລະນີບໍ່ຮູ້ຈຳນວນປະຊາກອນໃນການສຸ່ມຕົວຢ່າງປະຊາກອນ ໃນລະດັບຄວາມເຊື່ອໝັ້ນ 95 ສ່ວນຮ້ອຍ ຫຼື ລະດັບຄວາມເຊື່ອໝັ້ນ $P<0.05$. ສະນັ້ນ, ກຸ່ມປະຊາກອນຕົວຢ່າງທີ່ສຶກສາແມ່ນ 111 ຄົນ. ໂດຍຄຳນວນຕາມສູດຄິດໄລ່ລຸ່ມນີ້:

ສູດ:

$$n = \frac{P(1-P)Z^2}{e^2}$$

n = ຈຳນວນຂະໜາດຂອງກຸ່ມຕົວຢ່າງ

P = ສັດສ່ວນຂອງປະຊາກອນທີ່ຜູ້ສຶກສາກຳນົດສຸ່ມ

z = ລະດັບຄວາມເຊື່ອໝັ້ນ

e - ຄວາມຄາດເຄື່ອນທີ່ຍອມໃຫ້ເກີດຂຶ້ນ

Z = ມີຄ່າເທົ່າກັບ 1.96 ລະດັບຄວາມເຊື່ອໝັ້ນ 95% (ລະດັບຄວາມສຳຄັນ $\alpha$ =0.05)

- ກຸ່ມເປົ້າໝາຍໃນດ້ານພື້ນທີ່ການສຶກສາຄົ້ນຄ້ວາແມ່ນກຳນົດເຂດໃຈກາງຕົວເມືອງເກົ່ານະຄອນຫຼວງວຽງຈັນ, ວັດເກົ່າ ແລະ ສະຖາປັດຕະຍະກຳອານານິຄົມ, ສະຖາປັດຕະຍະກຳທ້ອງພື້ນຖິ່ນ ຕະຫຼອດຮອດສະພາບແວດທາງທຳມະຊາດທີ່ເປັນອົງປະກອບໂດຍລວມທີ່ຢູ່ອ້ອມຂ້າງເຂດໃຈກາງເມືອງເກົ່ານະຄອນຫຼວງວຽງຈັນ ເຊັ່ນ: ແມ່ນ້ຳ, ໜອງນ້ຳ, ເສັ້ນທາງ, ປ່າໄມ້ ເພື່ອນຳມາວິເຄາະ, ສັງລວມ ແລະ ປະເມີນທາງຕົວເມືອງເກົ່ານະຄອນຫຼວງວຽງຈັນ ໂດຍນອກຈາກນີ້ແລ້ວໃນການສຶກສາຄົ້ນຄ້ວາຄັ້ງນີ້ເພື່ອສ້າງຖານຂໍ້ມູນທີ່ສົມບູນໃນວຽກງານການອະນຸຮັກ ແລະ ແນວທາງໃນການພັດທະນາພື້ນທີ່ເຂດຕົວເມືອງເກົ່ານະຄອນຫຼວງວຽງຈັນ ເພື່ອສ້າງມູນຄ່າທາງດ້ານເສດຖະກິດ ແລະ ການທ່ອງທ່ຽວແບບຍືນຍົງ, ການກຳນົດກຸ່ມເປົ້າໝາຍແມ່ນຈະໄດ້ລວມເອົາການສຶກສາທາງດ້ານສະພາບແວດລ້ອມທາງທຳມະຊາດ, ສະພາບອາກາດ, ສະພາບທີ່ຕັ້ງທາງກາຍຍະພາບ ແລະ ໂຄງລ່າງພື້ນຖານ ລວມເຖິງກິດຈະກຳການຕ່າງໆທາງດ້ານວັດທະນະທຳ ແລະ ສັງຄົມ ທີ່ສົ່ງຜົນຕໍ່ຮູບແບບຂອງຕົວເມືອງເກົ່າ ແລະ ພື້ນທີ່ໂດຍຮອບປະກອບເຂົ້າໃນການສຶກສາໃນຄັ້ງນີ້ດ້ວຍ.

2.3. ເຄື່ອງມືໃນການຄົ້ນຄວ້າ

ການຄົ້ນຄວ້າຄັ້ງນີ້ແມ່ນຈະນຳໃຊ້ເຄື່ອງມືໃນການຄົ້ນຄວ້າຈາກສອງສ່ວນຄື: ສ່ວນທີ່ໜຶ່ງແມ່ນເຄື່ອງມືທີ່ໃຊ້ໃນການວິໄຈແມ່ນໃຊ້ແບບສອບຖາມ ເປັນເຄື່ອງມືໃນການເກັບລວບລວມຂໍ້ມູນຈາກກຸ່ມຕົວຢ່າງເປົ້າໝາຍກ່ຽວກັບທັດສະນະຄະຕິແນວທາງໃນການພັດທະນາພື້ນທີ່ເຂດຕົວເມືອງເກົ່າ ນະຄອນຫຼວງວຽງຈັນ ເພື່ອສ້າງມູນຄ່າທາງດ້ານເສດຖະກິດ ແລະ ການທ່ອງທ່ຽວແບບຍືນຍົງ ແລະ ສ່ວນທີ່ສອງແມ່ນເຄື່ອງມືທີ່ໃຊ້ໃນການປະເມີນຜົນ ແລະ ວິເຄາະຂໍ້ມູນທາງດ້ານພື້ນທີ່ແມ່ນຈະນຳໃຊ້ໂປຣແກຼມຄອມພິວເຕີເຂົ້າມາຊ່ວຍໃນການປະເມີນຜົນ ເຊິ່ງປະກອບດ້ວຍການແຕ້ມແຜນຜັງໂຄງສ້າງພື້ນທີ່ຂອງຕົວເມືອງເກົ່າ, ທີ່ຕັ້ງຂອງອາຄານວັດ, ສະຖາປັດຕະຍະກຳ, ວິວເສັ້ນທາງ, ພື້ນທີ່ ດ້ວຍໂປຣແກຼມຄອມ Autocad, 3D...

2.4. ການວິເຄາະຂໍ້ມູນ

ການວິເຄາະຂໍ້ມູນແມ່ນຈະວິເຄາະຢູ່ 2 ສ່ວນຄື: ໃນສ່ວນທີ່ໜຶ່ງແມ່ນການວິເຄາະຂໍ້ມູນຈາກແບບສອບຖາມ ຈາກຊຸມຊົນໃນພື້ນທີ່ ແລະ ພາກສ່ວນທີ່ກ່ຽວຂ້ອງຈະນຳໃຊ້ຈະນຳໂປຣແກມສຳເລັດຮູບທາງສະຖິຕິ SPSS version 22.0 ໃນວິເຄາະຂໍ້ມູນທີ່ໄດ້ຈາກແບບສອບຖາມແລ້ວ ໄດ້ນຳເອົາຂໍ້ມູນດັ່ງກ່າວມາດຳເນີນການວິເຄາະຊອກຫາຄ່າທາງສະຖິຕິຕ່າງໆ (Siljiru, 2010) ເຊັ່ນ: ຄ່າຄວາມຖີ່, ຄ່າສ່ວນຮ້ອຍ, ຄ່າສະເລ່ຍ (Mean), ຄ່າຜັນປ່ຽນມາດຕະຖານ (Std. Deviation). ສ່ວນທີ່ສອງແມ່ນການວິເຄາະຂໍ້ມູນ ແລະ ສັງເຄາະຂໍ້ມູນຜ່ານການສຶກສາ ເພື່ອນຳມາສັງລວມ ແລະ ດຳເນີນການສຶກສາຕາມວັດຖຸປະສົງທີ່ຕັ້ງໄວ້ໃນການດຳເນີນການວິໄຈ ໂດຍຈະວິເຄາະເຖິງໂຄງສ້າງຕົວເມືອງເກົ່ານະຄອນ ຫຼວງວຽງຈັນ ເພື່ອຊອກຫາທ່າແຮ່ງບົ່ມຊ້ອນແນວທາງໃນການພັດທະນາພື້ນທີ່ເຂດຕົວເມືອງເກົ່າ ນະຄອນຫຼວງວຽງຈັນ ເພື່ອສ້າງມູນຄ່າທາງດ້ານເສດຖະກິດ ແລະ ການທ່ອງທ່ຽວແບບຍືນຍົງ.

## 3. ຜົນໄດ້ຮັບ

ການສຶກສາແນວທາງໃນການພັດທະນາພື້ນທີ່ເຂດຕົວເມືອງເກົ່າ ນະຄອນຫຼວງວຽງຈັນ ເພື່ອສ້າງມູນຄ່າທາງດ້ານເສດຖະກິດ ແລະ ການທ່ອງທ່ຽວແບບຍືນຍົງ. ຈາກການເກັບກຳຂໍ້ມູນໃນພື້ນທີ່, ພາກສ່ວນຕ່າງໆທີ່ກ່ຽວຂ້ອງ ແລະ ການວິເຄາະທາງດ້ານພື້ນທີ່ ດັ່ງລຸ່ມນີ້:

*3.1 ທ່າແຮງທາງດ້ານກາຍະພາບ, ມໍລະດົກວັດທະນະທຳ ແລະ ວິຖີຊີວິດ ຂອງເຂດຕົວເມືອງເກົ່ານະຄອນຫຼວງວຽງຈັນ ທີ່ມີຜົນຕໍ່ການດຶງດູດການທ່ອງທ່ຽວ ແລະ ການພັດທະນາເສດຖະກິດສ້າງສັນ ພົບວ່າ:*

- ທ່າແຮງທາງດ້ານກາຍະພາບ ແລະ ມໍລະດົກຈາກການສຶກສາພົບວ່າ ດ້ານສູນລວມທາງຈິດໃຈ ແລະ ປະຫວັດສາດ ກຸ່ມຕົວຢ່າງໃຫ້ຄວາມສຳຄັນສູງສຸດແກ່ການທີ່ເຂດຕົວເມືອງເກົ່າມີສະຖານທີ່ສັກສິດ ແລະ ວັດວາອາຣາມ ($\bar{X}$= 4.07, SD = 0.87); ດ້ານຄວາມປອດໄພ ແລະ ບັນຍາກາດ: ຄວາມຕ້ອງການໃຫ້ມີລະບົບໄຟເຍືອງທາງທີ່ສວຍງາມ ແລະ ສອດຄ່ອງກັບບັນຍາກາດເມືອງເກົ່າ ມີຄ່າສະເລ່ຍສູງເປັນອັນດັບສອງ ($\bar{X}$= 4.06, SD = 1.06); ດ້ານຄວາມໂດດເດັ່ນຂອງສະຖາປັດຕະຍະກຳ: ອາຄານເກົ່າແກ່ (ສະໄໝອານານິຄົມ ແລະ ບູຮານ) ຖືກປະເມີນວ່າມີຄວາມໂດດເດັ່ນ ແລະ ສວຍງາມ ($\bar{X}$= 3.81, SD = 0.87); ດ້ານທີ່ຕັ້ງ ແລະ ການເຊື່ອມຕໍ່: ທີ່ຕັ້ງຂອງເຂດຕົວເມືອງເກົ່າມີຄວາມສະດວກໃນການເຊື່ອມຕໍ່ກັບແຫຼ່ງທ່ອງທ່ຽວແຄມຂອງ ແລະ ສູນກາງເມືອງ ($\bar{X}$= 3.76, SD = 0.88) ແລະ ດ້ານຜັງເມືອງ: ຜັງເມືອງ ແລະ ຮູບແບບຖະໜົນໃນເຂດເມືອງເກົ່າມີເອກະລັກທີ່ຫາເບິ່ງໄດ້ຍາກ ($\bar{X}$= 3.47, SD = 1.03).

- ທ່າແຮງດ້ານວັດທະນະທຳ ແລະ ວິຖີຊີວິດ ໃນເຂດຕົວເມືອງເກົ່ານະຄອນຫຼວງວຽງຈັນ ພົບວ່າ ກິດຈະກຳທາງວັດທະນະທຳ: ມີຄ່າສະເລ່ຍສູງສຸດ ($\bar{X}$= 3.84, SD= 0.93), ເຊິ່ງສະທ້ອນໃຫ້ເຫັນວ່າກິດຈະກຳທາງວັດທະນະທຳ ເປັນຕົ້ນວ່າ ການຕັກບາດ ແລະ ງານບຸນປະເພນີຕ່າງໆ ແມ່ນປັດໄຈຫຼັກທີ່ສ້າງຄວາມດຶງດູດໃຫ້ແກ່ນັກທ່ອງທ່ຽວ; ວິຖີຊີວິດ ແລະ ຄວາມເປັນມິດຂອງຊຸມຊົນ: ມີຄ່າສະເລ່ຍຢູ່ໃນລະດັບດຽວກັນ ($\bar{X}$= 3.58), ໂດຍກຸ່ມຕົວຢ່າງເຫັນວ່າວິຖີຊີວິດ ແລະ ຮີດຄອງປະເພນີດັ້ງເດີມຍັງຖືກຮັກສາໄວ້ຢ່າງເປັນທຳມະຊາດ ແລະ ຊຸມຊົນມີຄວາມເປັນມິດ ພ້ອມທີ່ຈະເປັນເຈົ້າພາບທີ່ດີ; ຄວາມປອດໄພ ແລະ ບັນຍາກາດ: ມີຄ່າສະເລ່ຍຕໍ່າສຸດໃນກຸ່ມ ($\bar{X}$= 3.42, SD = 1.00), ເຖິງວ່າຈະຢູ່ໃນເກນ "ຫຼາຍ" ແຕ່ກໍສະທ້ອນໃຫ້ເຫັນວ່າບັນຍາກາດໃນການຍ່າງທ່ຽວຊົມເມືອງ ແລະ ຄວາມປອດໄພ ຍັງເປັນຈຸດທີ່ສາມາດພັດທະນາໃຫ້ດີຂຶ້ນຕື່ມໄດ້.

- ທ່າແຮງດ້ານເສດຖະກິດ ແລະ ການທ່ອງທ່ຽວ ໃນເຂດຕົວເມືອງເກົ່ານະຄອນຫຼວງວຽງຈັນ ພົບວ່າ ຄວາມຫຼາກຫຼາຍຂອງທຸລະກິດ: ກຸ່ມຕົວຢ່າງໃຫ້ທັດສະນະຄະຕິສູງສຸດຕໍ່ກັບຄວາມຫຼາກຫຼາຍຂອງທຸລະກິດບໍລິການ ເປັນຕົ້ນແມ່ນ ຮ້ານກາເຟ, ຮ້ານອາຫານ ແລະ ໂຮງແຮມ ທີ່ສອດຄ່ອງກັບບັນຍາກາດເມືອງເກົ່າ ($\bar{X}$= 3.95, SD = 0.88); ການປະຊາສໍາພັນ: ມີການນໍາໃຊ້ສື່ສັງຄົມອອນລາຍຢ່າງກວ້າງຂວາງ ເພື່ອສົ່ງເສີມການທ່ອງທ່ຽວ ແລະ ປະຊາສໍາພັນພື້ນທີ່ ($\bar{X}$= 3.78, SD = 1.00); ການສ້າງລາຍໄດ້ໃຫ້ທ້ອງຖິ່ນ : ເຂດຕົວເມືອງເກົ່າມີທ່າແຮງໃນການສ້າງລາຍໄດ້ໃຫ້ແກ່ປະຊາຊົນໃນພື້ນທີ່ ຜ່ານການຂາຍສິນຄ້າ ແລະ ການບໍລິການຕ່າງໆ ($\bar{X}$= 3.71, SD = 0.95); ການພັດທະນາເປັນເສດຖະກິດສ້າງສັນ : ພື້ນທີ່ດັ່ງກ່າວຍັງມີທ່າແຮງໃນການພັດທະນາໃຫ້ກາຍເປັນເຂດ "ເສດຖະກິດສ້າງສັນ" ໃນອະນາຄົດ ($\bar{X}$= 3.68, SD = 0.99).

3.2 ສະພາບບັນຫາ ແລະ ຂໍ້ຈໍາກັດ ໃນດ້ານໂຄງລ່າງພື້ນຖານ, ສິ່ງແວດລ້ອມ, ການຄຸ້ມຄອງມໍລະດົກ ແລະ ຜົນກະທົບທາງດ້ານເສດຖະກິດ-ສັງຄົມ ທີ່ເກີດຂຶ້ນໃນພື້ນທີ່ເຂດຕົວເມືອງເກົ່າໃນປະຈຸບັນ ພົບວ່າ

- ບັນຫາດ້ານສະພາບກາຍະພາບ ແລະ ມໍລະດົກ ພົບວ່າ ບັນຫາທີ່ພົບຫຼາຍທີ່ສຸດ: ແມ່ນອາຄານປະຫວັດສາດ ແລະ ມໍລະດົກເກົ່າແກ່ມີຄວາມຊຸດໂຊມ ແລະ ຂາດການສ້ອມແປງ ($\bar{X}$= 3.92, SD = 0.99); ບັນຫາດ້ານພື້ນທີ່: ພື້ນທີ່ສາທາລະນະ ແລະ ພື້ນທີ່ສີຂຽວໃນເຂດຕົວເມືອງເກົ່າມີບໍ່ພຽງພໍ ($\bar{X}$= 3.75, SD = 1.11); ບັນຫາການກໍ່ສ້າງໃໝ່: ການກໍ່ສ້າງອາຄານໃໝ່ໃນເຂດເມືອງເກົ່າມີຮູບແບບທີ່ບໍ່ສອດຄ່ອງກັບສະຖາປັດຕະຍະກໍາເດີມ ($\bar{X}$= 3.69, SD = 1.08); ບັນຫາການດັດແປງອາຄານ: ມີການດັດແປງ ຫຼື ຕໍ່ເຕີມອາຄານເກົ່າທີ່ຜິດຮູບແບບ ແລະ ເຮັດໃຫ້ເສຍເອກະລັກດັ້ງເດີມ ($\bar{X}$= 3.45, SD = 1.03).

- ບັນຫາດ້ານໂຄງລ່າງພື້ນຖານ ແລະ ສິ່ງແວດລ້ອມ ພົບວ່າ ບັນຫາທີ່ພົບຫຼາຍທີ່ສຸດ: ແມ່ນບັນຫາການສັນຈອນແອອັດ ແລະ ຄວາມບໍ່ເປັນລະບຽບຂອງການຈອດລົດຕາມແຄມທາງ ເຊິ່ງມີຄ່າສະເລ່ຍສູງສຸດ ($\bar{X}$= 4.12, SD = 0.99); ບັນຫາດ້ານທັດສະນີຍະພາບ ແລະ ສິ່ງແວດລ້ອມ: ກຸ່ມຕົວຢ່າງເຫັນວ່າບັນຫາສາຍໄຟຟ້າ, ສາຍກາບ, ປ້າຍໂຄສະນາທີ່ຂາດຄວາມເປັນລະບຽບ ລວມທັງບັນຫາຂີ້ເຫຍື້ອ ແລະ ມົນລະພິດ ມີລະດັບບັນຫາຢູ່ໃນເກນ "ຫຼາຍ" ເທົ່າກັນ ($\bar{X}$= 3.94); ບັນຫາດ້ານທາງຍ່າງ: ສະພາບທາງຍ່າງ (Sidewalk) ທີ່ມີຄວາມຊຸດໂຊມ, ແຄບ ຫຼື ຖືກນໍາໃຊ້ຜິດປະເພດ ກໍເປັນບັນຫາທີ່ຢູ່ໃນເກນ "ຫຼາຍ" ເຊັ່ນກັນ ($\bar{X}$= 3.91, SD = 1.10).

- ບັນຫາດ້ານເສດຖະກິດ, ນະໂຍບາຍ ແລະ ການຄຸ້ມຄອງ ພົບວ່າ ບັນຫາດ້ານງົບປະມານ ແລະ ສິ່ງຈູງໃຈ: ເປັນບັນຫາທີ່ມີຄ່າສະເລ່ຍສູງສຸດ ໂດຍເຈົ້າຂອງອາຄານເກົ່າຂາດງົບປະມານ ແລະ ສິ່ງຈູງໃຈທາງດ້ານການເງິນໃນການບູລະນະຮັກສາ ($\bar{X}$= 3.69, SD = 0.96); ບັນຫາດ້ານຄ່າຄອງຊີວິດ: ຄ່າເຊົ່າພື້ນທີ່ ຫຼື ຄ່າຄອງຊີວິດໃນເຂດເມືອງເກົ່າສູງຂຶ້ນ ເຮັດໃຫ້ຜູ້ອາໄສດັ້ງເດີມຕ້ອງຍ້າຍອອກ ແມ່ນບັນຫາທີ່ຢູ່ໃນເກນ "ຫຼາຍ" ເປັນອັນດັບສອງ ($\bar{X}$= 3.67, SD = 1.11); ຜົນກະທົບຈາກການທ່ອງທ່ຽວ: ການທ່ອງທ່ຽວທີ່ເພີ່ມຂຶ້ນເລີ່ມສົ່ງຜົນກະທົບຕໍ່ຄວາມເປັນສ່ວນຕົວ ແລະ ວິຖີຊີວິດຂອງຊຸມຊົນ ($\bar{X}$= 3.56, SD = 1.06); ການປະສານງານ ແລະ ການມີສ່ວນຮ່ວມ: ຍັງຂາດການປະສານງານ ແລະ ການມີສ່ວນຮ່ວມລະຫວ່າງພາກລັດ, ເອກະຊົນ ແລະ ຊຸມຊົນທ້ອງຖິ່ນ ($\bar{X}$= 3.50, SD = 1.18); ນະໂຍບາຍ ແລະ ກົດລະບຽບ: ກົດລະບຽບ ແລະ ນະໂຍບາຍໃນການອະນຸລັກມີຄວາມເຂັ້ມງວດເກີນໄປ ຫຼື ບໍ່ຊັດເຈນໃນພາກປະຕິບັດ ກໍເປັນບັນຫາທີ່ຢູ່ໃນເກນ "ຫຼາຍ" ເຊັ່ນກັນ ($\bar{X}$= 3.49, SD = 0.99).

3.3 ແນວທາງ ແລະ ຍຸດທະສາດໃນການພັດທະນາພື້ນທີ່ ໃຫ້ກາຍເປັນສູນກາງການທ່ອງທ່ຽວແບບຍືນຍົງ ໂດຍເນັ້ນການສ້າງມູນຄ່າເພີ່ມທາງດ້ານເສດຖະກິດ ຜ່ານການປັບໃຊ້ຢ່າງສ້າງສັນ ແລະ ການມີສ່ວນຮ່ວມຂອງຊຸມຊົນ ພົບວ່າ:

- ແນວທາງການພັດທະນາດ້ານກາຍະພາບ ແລະ ສະຖາປັດຕະຍະກໍາ ພົບວ່າ ການປັບປຸງແສງສະຫວ່າງ ແລະ ບັນຍາກາດ: ເປັນແນວທາງທີ່ກຸ່ມຕົວຢ່າງໃຫ້ຄວາມສໍາຄັນສູງສຸດ ໂດຍເຫັນວ່າຄວນມີລະບົບໄຟເຍືອງທາງທີ່ສວຍງາມ ແລະ ສອດຄ່ອງກັບບັນຍາກາດເມືອງເກົ່າ ເພື່ອຄວາມປອດໄພໃນຕອນກາງຄືນ ($\bar{X}$= 4.06, SD = 1.06); ການເພີ່ມພື້ນທີ່ສີຂຽວ: ຄວນເພີ່ມພື້ນທີ່ສີຂຽວ ແລະ ບ່ອນພັກຜ່ອນສາທາລະນະຂະໜາດນ້ອຍ ໃນເຂດຕົວເມືອງເກົ່າ ($\bar{X}$= 3.99, SD = 1.00); ການຈັດລະບຽບທັດສະນີຍະພາບ: ຄວນມີການຈັດລະບຽບປ້າຍໂຄສະນາ ແລະ ສາຍໄຟຟ້າ ເພື່ອບໍ່ໃຫ້ບົດບັງຄວາມງາມຂອງອາຄານປະຫວັດສາດ ($\bar{X}$= 3.89, SD = 0.91); ການກໍານົດມາດຕະຖານການບູລະນະ: ຄວນມີການກໍານົດມາດຕະຖານໃນການບູລະນະໜ້າຕາອາຄານເກົ່າ ໃຫ້ຮັກສາຮູບແບບເດີມໄວ້ ($\bar{X}$= 3.84, SD = 0.96); ການສົ່ງເສີມທຸລະກິດໃໝ່ໃນອາຄານເກົ່າ: ຄວນຊຸກຍູ້ການປ່ຽນອາຄານເກົ່າໃຫ້ເປັນທຸລະກິດໃໝ່ ເຊັ່ນ: ໂຮງແຮມ ຫຼື ຫ້ອງສະແດງສິລະປະ ($\bar{X}$= 3.72, SD = 1.01).

- ແນວທາງການພັດທະນາດ້ານໂຄງລ່າງພື້ນຖານ ແລະ ການສັນຈອນ ພົບວ່າ ການປັບປຸງທາງຍ່າງ: ເປັນແນວທາງທີ່ກຸ່ມຕົວຢ່າງໃຫ້ຄວາມສໍາຄັນສູງສຸດ ໂດຍເຫັນວ່າຄວນປັບປຸງທາງຍ່າງໃຫ້ມີຄວາມຕໍ່ເນື່ອງ ແລະ ສະດວກສໍາລັບທຸກຄົນ ລວມທັງຄົນພິການ ($\bar{X}$= 4.21, SD = 1.00); ການຈັດສັນບ່ອນຈອດລົດ: ຄວນຈັດສັນບ່ອນຈອດລົດລວມຢູ່ຂອບນອກຂອງເຂດຕົວເມືອງເກົ່າ ເພື່ອຫຼຸດຜ່ອນຈໍານວນລົດໃນຊອຍແຄບ ($\bar{X}$= 4.14, SD = 0.99); ການສັນຈອນທາງເລືອກ ແລະ ຄວາມປອດໄພ: ກຸ່ມຕົວຢ່າງເຫັນດີໃນລະດັບເທົ່າກັນ ($\bar{X}$= 4.08) ຕໍ່ກັບການກໍານົດເສັ້ນທາງລົດຖີບເພື່ອເຊື່ອມໂຍງກິດຈະກໍາໃນພື້ນທີ່ ແລະ ການຕິດຕັ້ງລະບົບໄຟເຍືອງທາງທີ່ສວຍງາມໃຫ້ສອດຄ່ອງກັບບັນຍາກາດເມືອງເກົ່າ; ການຈັດການການສັນຈອນສາທາລະນະ: ຄວນກໍານົດຈຸດປ່ຽນຖ່າຍການສັນຈອນສາທາລະນະ ແລະ ຈັດສັນພື້ນທີ່ການເຂົ້າເຖິງສະຖານທີ່ສໍາຄັນຕ່າງໆ ($\bar{X}$= 4.01, SD = 0.85); ຖະໜົນຄົນຍ່າງ: ການກໍານົດບາງຖະໜົນໃຫ້ເປັນ "ຖະໜົນຄົນຍ່າງ" ໃນຊ່ວງທ້າຍອາທິດ ກໍເປັນແນວທາງທີ່ຢູ່ໃນເກນ "ຫຼາຍ" ເຊັ່ນກັນ ($\bar{X}$= 3.98, SD = 1.08).

- ແນວທາງການພັດທະນາດ້ານເສດຖະກິດສ້າງສັນ ແລະ ການທ່ອງທ່ຽວ ພົບວ່າການສົ່ງເສີມກິດຈະກໍາ ແລະ ເທສະການ: ເປັນແນວທາງທີ່ກຸ່ມຕົວຢ່າງໃຫ້ຄວາມສໍາຄັນສູງສຸດ ໂດຍເຫັນວ່າຄວນສົ່ງເສີມການຈັດກິດຈະກໍາທາງວັດທະນະທໍາ ແລະ ເທສະການຕ່າງໆຢ່າງເປັນປະຈໍາ ($\bar{X}$= 3.98, SD = 0.90); ການສ້າງຍີ່ຫໍ້ : ກຸ່ມຕົວຢ່າງເຫັນດີໃນລະດັບຫຼາຍຕໍ່ກັບການສ້າງຍີ່ຫໍ້ໃຫ້ເຂດຕົວເມືອງເກົ່າເປັນ "ສູນກາງວັດທະນະທໍາ ແລະ ຄວາມສ້າງສັນ" ($\bar{X}$= 3.88, SD = 1.01); ການນໍາໃຊ້ເຕັກໂນໂລຊີໃນການທ່ອງທ່ຽວ: ຄວນມີສູນຂໍ້ມູນ

ການທ່ອງທ່ຽວທີ່ທັນສະໄໝ ແລະ ການນຳໃຊ້ Digital Map ເພື່ອນຳທ່ຽວໃນເຂດເມືອງເກົ່າ ($\bar{X}$= 3.84, SD = 1.08); ການພັດທະນາຜະລິດຕະພັນຊຸມຊົນ : ຄວນມີການຝຶກອົບຮົມ ແລະ ຊຸກຍູ້ໃຫ້ຄົນໃນຊຸມຊົນຜະລິດສິນຄ້າຂອງຂວັນທີ່ເປັນເອກະລັກຂອງວຽງຈັນ ($\bar{X}$= 3.80, SD = 0.98).

## 4. ວິພາກຜົນ

ຈາກຜົນການຄົ້ນຄວ້າ ເຫັນໄດ້ຢ່າງຊັດເຈນວ່າ ການພັດທະນາເຂດຕົວເມືອງເກົ່ານະຄອນຫຼວງວຽງຈັນ ເພື່ອສ້າງມູນຄ່າທາງດ້ານເສດຖະກິດ ແລະ ການທ່ອງທ່ຽວແບບຍືນຍົງ ໂດຍຜ່ານສາມດ້ານຄື: ດ້ານທີ່ໜຶ່ງທ່າແຮງທາງດ້ານກາຍະພາບ, ມໍລະດົກວັດທະນະທຳ ແລະ ວິຖີຊີວິດ ຂອງເຂດຕົວເມືອງເກົ່ານະຄອນຫຼວງວຽງຈັນ ທີ່ມີຜົນຕໍ່ການດຶງດູດການທ່ອງທ່ຽວ ແລະ ການພັດທະນາເສດຖະກິດສ້າງສັນ: ຜົນການວິໄຈຊີ້ໃຫ້ເຫັນວ່າ ການເອົາໃຈໃສ່ຄົນຍ່າງເປັນອັນດັບ ໜຶ່ງແມ່ນຫົວໃຈສຳຄັນ ໂດຍສະເພາະການປັບປຸງທາງຍ່າງໃຫ້ສະດວກຕໍ່ເນື່ອງ, ການຈັດສັນບ່ອນຈອດລົດໄວ້ຂອບນອກ ແລະ ການຕິດຕັ້ງໄຟເຍືອງທາງທີ່ສວຍງາມ ເພື່ອກະຕຸ້ນການທ່ອງທ່ຽວຍາມຄ່ຳຄືນ. ປະເດັນນີ້ສອດຄ່ອງຢ່າງຍິ່ງກັບຜົນການສຶກສາຂອງ (Souvannavong et al., 2024) ທີ່ຢືນຢັນວ່າການວາງແຜນພູມີທັດ/ທັດສະນີຍະພາບທີ່ລະອຽດອ່ອນເຊັ່ນ: ການຈັດລະບຽບປ້າຍ, ສາຍໄຟ ແລະ ໄຟເຍືອງທາງ ແມ່ນກຸນແຈສຳຄັນໃນການປົກປັກຮັກສາບູຮານສະຖານຄວບຄູ່ໄປກັບການສົ່ງເສີມການທ່ອງທ່ຽວ. ນອກຈາກນີ້, ຜົນການວິໄຈຍັງເຫັນດີກັບ (Paphaiphath et al., 2018) ທີ່ລະບຸວ່າ ການນຳເອົາ “ບົດຮຽນທາງກາຍະພາບໃນອະດີດ” ມາປັບໃຊ້ກັບ “ກົນໄກເສດຖະກິດໃນປັດຈຸບັນ” ຜ່ານການວາງຜັງທີ່ເອົາໃຈໃສ່ລາຍລະອຽດຈະຊ່ວຍແກ້ໄຂ “ວິກິດການດ້ານອັດຕະລັກ” ແລະ ປ້ອງກັນບໍ່ໃຫ້ສະຖາປັດຕະຍະກຳດັ້ງເດີມສູນຫາຍໄປ. ດ້ານທີ່ສອງສະພາບບັນຫາ ແລະ ຂໍ້ຈຳກັດ ໃນດ້ານໂຄງລ່າງພື້ນຖານ, ສິ່ງແວດລ້ອມ, ການຄຸ້ມຄອງມໍລະດົກ ແລະ ຜົນກະທົບທາງດ້ານເສດຖະກິດ-ສັງຄົມ ທີ່ເກີດຂຶ້ນໃນພື້ນທີ່ເຂດຕົວເມືອງເກົ່າ: ຜົນການວິໄຈສະທ້ອນໃຫ້ເຫັນຄວາມກັງວົນທີ່ສອດຄ່ອງກັບ (Keobountham, 2020) ແລະ (Pupiupaa et al., 2021) ທີ່ເຕືອນວ່າ ການພັດທະນາພາຍໃຕ້ກົນໄກ “ເສລີນິຍົມ ໃໝ່ (Neoliberalism)” ແລະ “ການຫັນທີ່ດິນເປັນທຶນ” ທີ່ຜູກຂາດໂດຍກຸ່ມທຶນອະສັງຫາລິມະຊັບເປັນໄພຄຸກຄາມອັນຕະລາຍທີ່ຈະຍູ້ຊຸມຊົນດັ້ງເດີມອອກໄປ (Gentrification) ແລະ ທຳລາຍມໍລະດົກທາງກາຍະພາບ ແລະ ດ້ານທີ່ສາມແນວທາງ ແລະ ຍຸດທະສາດໃນການພັດທະນາພື້ນທີ່ ໃຫ້ກາຍເປັນສູນກາງການທ່ອງທ່ຽວແບບຍືນຍົງ ໂດຍເນັ້ນການສ້າງມູນຄ່າເພີ່ມທາງດ້ານເສດຖະກິດ ຜ່ານການປັບໃຊ້ຢ່າງສ້າງສັນ ແລະ ການມີສ່ວນຮ່ວມຂອງຊຸມຊົນ: ການຂັບເຄື່ອນເສດຖະກິດສ້າງສັນ ແລະ ການປົກປັກຮັກສາມໍລະດົກ ໃນດ້ານເສດຖະກິດ ແລະ ວັດທະນະທຳ, ການສ້າງຍີ່ຫໍ້ເມືອງເກົ່າໃຫ້ເປັນ “ສູນກາງວັດທະນະທຳສ້າງສັນ” ຜ່ານການຈັດເທສະການ ແລະ ການປັບໃຊ້ອາຄານເກົ່າສູ່ທຸລະກິດໃໝ່ ແມ່ນຍຸດທະສາດທີ່ສ້າງມູນຄ່າເພີ່ມໄດ້ດີ. ຜົນໄດ້ຮັບນີ້ສອດຄ່ອງກັບ (Borgers, n.d.) ທີ່ສະເໜີວ່າ ມໍລະດົກວັດທະນະທຳບໍ່ຄວນຖືກປ່ອຍໃຫ້ສູນເສຍໄປ ຫຼື ຖືກອະນຸລັກໄວ້ແບບແຂງກະດ້າງ, ແຕ່ຕ້ອງນຳມາສ້າງອັດຕະລັກ ແລະ ຂັບເຄື່ອນເສດຖະກິດໃຫ້ເກີດປະໂຫຍດຕົວຈິງ. ນອກຈາກນັ້ນການຄົ້ນຄວ້າຂອງ (Souvannavong et al., 2024; Borgers, n.d.) ຈຶ່ງເຫັນດີຮ່ວມກັນຢ່າງເປັນເອກະພາບວ່າ ຕ້ອງອາໄສການປະຕິຮູບດ້ານສະຖາບັນ, ນະໂຍບາຍສະໜັບສະໜູນທີ່ເຂັ້ມແຂງຈາກພາກລັດ (ເຊັ່ນ: ມາດຕະການຈູງໃຈທາງພາສີ, ການສ້າງຕັ້ງກອງທຶນບູລະນະ), ຄວບຄູ່ໄປກັບການສ້າງກົນໄກການມີສ່ວນຮ່ວມຂອງຊຸມຊົນທ້ອງຖິ່ນ ຢ່າງແທ້ຈິງເພື່ອໃຫ້ຊຸມຊົນດັ້ງເດີມໄດ້ຮັບປະໂຫຍດ ແລະ ເປັນກຳລັງຫຼັກໃນການຮັກສາອັດຕະລັກຂອງເມືອງເກົ່າໄວ້ຢ່າງຍືນຍົງ.

## 5. ສະຫຼຸບ

ການສຶກສາເຫັນວ່າ ແນວທາງການພັດທະນາເຂດຕົວເມືອງເກົ່ານະຄອນຫຼວງວຽງຈັນ ເພື່ອສ້າງມູນຄ່າທາງດ້ານເສດຖະກິດ ແລະ ການທ່ອງທ່ຽວແບບຍືນຍົງ ເຫັນວ່າດ້ານທ່າແຮງ: ເຂດຕົວເມືອງເກົ່ານະຄອນຫຼວງວຽງຈັນ ມີທ່າແຮງຫຼັກດ້ານ “ສະຖານທີ່ສັກສິດ/ວັດວາອາຮາມ” ທີ່ເປັນສູນລວມຈິດໃຈ, ມີ “ກິດຈະກຳທາງວັດທະນະທຳ” (ຕັກບາດ, ງານບຸນ) ທີ່ດຶງດູດນັກທ່ອງທ່ຽວ ແລະ ມີ “ທຸລະກິດບໍລິການທີ່ຫຼາກຫຼາຍ” (ຮ້ານກາເຟ, ຮ້ານອາຫານ, ໂຮງແຮມ) ທີ່ສອດຄ່ອງກັບບັນຍາກາດເມືອງເກົ່າ ພ້ອມທີ່ຈະພັດທະນາເປັນເຂດເສດຖະກິດສ້າງສັນ. ດ້ານສະພາບບັນຫາ: ບັນຫາຮຸນແຮງທີ່ສຸດແມ່ນ “ການສັນຈອນແອອັດ ແລະ ການຈອດລົດບໍ່ເປັນລະບຽບ”, ເຄື່ອງອາຄານປະຫວັດສາດ ຊຸດໂຊມຂາດການສ້ອມແປງ (ຍ້ອນເຈົ້າຂອງຂາດງົບປະມານ), ທາງຍ່າງຊຸດໂຊມ, ບັນຫາສາຍໄຟ/ຂີ້ເຫຍື້ອ ແລະ ຄ່າຄອງຊີວິດທີ່ສູງຂຶ້ນຈົນກະທົບຕໍ່ວິຖີຊີວິດຊຸມຊົນດັ້ງເດີມ. ດ້ານແນວທາງພັດທະນາ: ເນັ້ນ “ການປັບປຸງທາງຍ່າງ” ໃຫ້ສະດວກ, ຈັດສັນບ່ອນຈອດລົດໄວ້ຂອບນອກ, ປັບປຸງລະບົບໄຟເຍືອງທາງ ເພື່ອຄວາມປອດໄພ, ສົ່ງເສີມກິດຈະກຳ/ເທສະການວັດທະນະທຳ ຢ່າງປະຈຳ ແລະ ສ້າງຍີ່ຫໍ້ເມືອງເກົ່າໃຫ້ເປັນ “ສູນກາງວັດທະນະທຳ ແລະ ຄວາມສ້າງສັນ”.

## 6. ຂໍ້ຂັດແຍ່ງ

ຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດ ພ້ອມດ້ວຍທີມງານ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະກໍລະນີມີການລະເມີດ ໃນຮູບການໃດໜຶ່ງ ຂ້າພະເຈົ້າມີຄວາມຍິນດີ ທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

## 7. ເອກະສານອ້າງອີງ


ມະໂນທັມ, ທ. (2009 ກ). *ນະຄອນຫຼວງວຽງຈັນສະໄໝອານາຈັກລາວລ້ານຊ້າງ*. ນະຄອນຫຼວງວຽງຈັນ.

ມະໂນທັມ, ທ. (2009 ຂ). *ນະຄອນຫຼວງວຽງຈັນສະໄໝລາວເປັນອານານິຄົມຂອງຝຣັ່ງ*. ນະຄອນຫຼວງວຽງຈັນ.

ມະໂນທັມ, ທ. (2009 ຄ). *ນະຄອນຫຼວງວຽງຈັນ ສະໄໝຣາຊະອານາຈັກລາວ*. ນະຄອນຫຼວງວຽງຈັນ.

Borgers, S. H. C. (n.d.). *Preserving the Past, Shaping the Future: Introducing Heritage and Land Readjustment in Vientiane, Laos*.

Hayward, D. (2017). *Understanding Institutional Challenges for Urban Planning in Vientiane, Laos*. Urban Climate Resilience in Southeast Asia Project.

Sengonkeo, L., Khammoungkhoun, A., Chnathankhone, K., Southichack, P., & Onmavong, T. (2025a). Study on Value Assessment of the Old Town of Xanakharm for Rehabilitation toward Integration to Local and Regional Tourism Routes. *Souphanouvong University Journal Multidisciplinary Research and Development*, *11*(03), 33–39. https://doi.org/10.69692/SUJMRD110333

Sengonkeo, L., Sihavong, S., Syhalate, P., Insyxiengmai, S., & Phongkhamdeng, P. (2024b). Value of Colonial Architectural Heritage for Sustainable Tourism Promotion in Center of Thakhek City. *Souphanouvong University Journal Multidisciplinary Research and Development*, *11*(1), 01–09. https://doi.org/10.69692/SUJMRD11010109

Souvannavong, V., Khammoungkhoun, A., & Sengonkeo, L. (2024). Attitudes and Participation in Landscaping for the Reservation of Ancient Sites and the Promotion of Tourism; Case Study: Vientiane District Wall City Wall City Cluster. *Souphanouvong University Journal Multidisciplinary Research and Development*, *10*(4), 271–277. https://doi.org/10.69692/SUJMRD1004271

Siljiru, T. (2010). *Research and statistical data analysis by SPSS and AMOS (11th ed.).* ISBN: 9789741044108. Bangkok: business R and D ordinary partnership.

Sedgwick, P. (2013). Convenience Sampling. British Medical Journal, 2013, 347. https://doi.org/10.1136/bmj.f6304

Sayarath, C. (2003) *Vientiane architectures civiles et religious. Vientiane cahiers de I'Ipraus/E'ditions Recherches (French Language).*

JICA. (2011). *The Project for Urban Development Master Plan Study in Vientiane Capital. Japan International Cooperation Agency (JICA), Tokyo.*

Keobountham, S. (2020). The Production of Urban Space in Vientiane: From Colonial to Neoliberal Times (1893-2020). *OALib*, *07*(09), 1–18. https://doi.org/10.4236/oalib.1106696

Paphaiphath, S., & Wei, D. (2018). *Study on City Physical Evolution in the Old Town of Vientiane Capital, Laos.*

Pupiupa, P., & Mattariganond, D. (2021). *The Establishment of Vientiane as the New Capital of the Lan Xang Kingdom in the Reign of King Xaysetthathirath*.

## ແຜນທີ່ປະກອບໃນການຄົ້ນຄວ້າ




ຮູບທີ 1 ແຜນທີ່ສະຖານວັດສຳຄັນໃນພື້ນທີ່ເຂດໃຈກາງຕົວເມືອງ



ຮູບທີ 2 ແຜນທີ່ແຍກປະເພດການນຳໃຊ້ອາຄານໃນພື້ນທີ່ເຂດຕົວເມືອງເກົ່າ